# 1. ການກຽມກ້າດາປ໋ອກ

ແມ່ນເປັນວິທີການໜຶ່ງ ເພື່ອແກ້ໄຂໃນເວລາສຸກເສີນ ແລະ ເພື່ອເຮັດໃຫ້ຜະລິດທັນກັບລະດູການເຊັ່ນ: ສະພາວະທີ່ແຫ້ງແລ້ງ, ນໍ້າຖ້ວມເຕັກນິກດັ່ງກ່າວນີ້ແມ່ນສາມາດເຮັດໄດ້ທຸກເວລາ ແລະບໍ່ຕ້ອງການເນື້ອທີ່ຫຼາຍສ່ວນວັດຖຸທີ່ນໍາໃຊ້ກໍ່ເປັນວັດສະດຸພື້ນບ້ານ ວິທີການປະຕິບັດກໍ່ແບບງ່າຍດາຍ.

# 2. ວັດຖຸທີ່ໃຊ້ໃນການເຮັດໜານກ້າ

- ພື້ນຊີມັງ, ແຜນຢາງ ຫຼືໃບຕ້ອງກ້ວຍ( ປູໜ້າໜານກ້າ ).
- ລູກກິ້ງ ຫຼືແກ້ວກົມ (ສໍາລັບປັບໜ້າໜານກ້າ ຫຼືແປງປະທາ)
- ບົວຫົດນໍ້າ(ໃຊ້ສໍາລັບຫົດນໍ້າ)
- ຟອຍກ້ານຟ້າວ
- ໄມ້ສໍາລັບເຮັດຂອບຕາກ້າ ຫຼືກາບກ້ວຍ
- ໄຖ່ປານ (ໃຊ້ໃນເວລາບົ່ມເຂົ້າ)
- ເມັດພັນ (ພັນເຂົ້າປັບປຸງ)

– ທີ່ມີຄວາມງອກ 85% ຂຶ້ນໄປ, ອັດຕາ 100 120 Kg/ ha

– ເນື້ອທີ່ 1 $m^2$ / 3 kg, ເນື້ອທີ່ຕົກກ້າ: 40 50 $m^2$ / ha

# 3. ຂັ້ນຕອນ ແລະ ວິທີການປະຕິບັດ

## 3.1. ຂັ້ນຕອນກະກຽມ

– **ການແຊ່ເມັດພັນ** ໃຊ້ເວລາປະມານ 24 _ 36 ຊົ່ວໂມງ

– **ການບົ່ມເມັດພັນ** ໃຊ້ເວລາປະມານ 24 ຊົ່ວໂມງ. ການບົ່ມແມ່ນສັງເກດເຫັນເມັດພັນແຕກສົບນົກກໍ່ຈຶ່ງນໍາມາຢາຍໃສ່ໜານທີ່ກຽມໄວ້

– **ສະຖານທີ່** ຮົ່ມໄມ້, ໃນເຮືອນ ຫຼືບ່ອນທີ່ບໍ່ມີແສງແດດຫຼາຍ.

## 3.2. ວິທີການປະຕິບັດ

### 3.2.1. ການກ້າໃສ່ພື້ນດິນ

ຂະໜາດຂອງໜານກ້າແມ່ນກວ້າງປະມານ 1 ແມັດ, ສ່ວນລວງຍາວແມ່ນຕາມຄວາມເໝາະສົມ, ປັບໜ້າດິນໃຫ້ຮາບພຽງດີ, ນໍາເອົາກາບກ້ວຍ ຫຼືໄມ້ຂະໜາດ 4 x 8 ເຮັດຂອບ, ສ່ວນບໍລິເວນກ້ອງໜານແມ່ນໃຊ້ກາບກ້ວຍທີ່ປາດເອົາການອອກ ຫຼືໃຊ້ຜ້າຢາງປູກໍ່ໄດ້, ຫຼັງຈາກນັ້ນໃຫ້ເຮັດຮ່ອງລະບາຍນໍ້າຈາກພື້ນໜານ ຫຼັງຈາກເອົາເຂົ້າທີ່ບົ່ມແລ້ວຢາຍລົງໃສ່ໜານສູງ ປະມານ 1 – 2 ຕມ.






ເອົາເຂົ້າຢາຍລົງໃສ່ໜານ ສູງປະມານ 1 ຫາ 2 ຊຕມ

### 3.2.2. ສິ່ງທີ່ຄວນເອົາໃຈໃສ່

ການຫົດນໍ້າມື້ໜຶ່ງ 3 ຫາ 4 ເທື່ອ ຫຼືເອົາຟອຍຈຸ່ມນໍ້າແລ້ວຊິດໃສ່, ພາຍຫຼັງການຫົດນໍ້າທຸກເທື່ອໃຫ້ເອົາແກ້ວລິ້ງ ຫຼືເອົາໄມ້ ຕົບໜານກ້າໃຫ້ແຈບ ເພື່ອບໍ່ໃຫ້ເມັດເຂົ້າຟູຂຶ້ນ.

ເມື່ອກ້າອາຍຸໄດ້ປະມານ 9_14 ມື້, ຕົ້ນກ້າຈະມີຄວາມສູງປະມານ 10_12 ຊຕມ, ກໍ່ໃຫ້ນໍາເອົາໄປດໍາ, ແຕ່ບໍ່ໃຫ້ກາຍ 16 ມື້ (ເພາະວ່າອາຫານພາຍໃນເມັດເຂົ້າໄດ້ໝົດແລ້ວ).



ການຫວ່ານ ແນວພັນເຂົ້າ ໃຫ້ສະໜໍາສະເໝີ



ການປັບໜ້າດິນເພື່ອເປັນການປົກຄຸມເມັດພັນເຂົ້າ

### 3.2.3. ວິທີການເອົາກ້າໄປດໍາ

ເມື່ອອາຍຸກ້າໄດ້ຕາມກໍານົດແລ້ວ ແມ່ນໃຫ້ກໍ້ຄືກັບກໍ້ສາດແລ້ວກໍ່ສີກອອກໄປດໍາ.




ການປັກດໍາກ້າຫວ່ານ




ການປັກດໍາກ້າດາປ໋ອກ

### 3.2.4. ການປັກດຳ

– ການກຽມດິນລະອຽດບໍ່ໃຫ້ມີນ້ຳຂັງ
– ດຶງກ້າອອກປັກດຳ 2 _ 3 ຕົ້ນ / ສຸມ
– ຄວາມເລິກແມ່ນ 1_2 ຊຕມ ຫຼືປະມານ 1 ຂໍ້ມືເພາະກ້າສັ້ນ
– ໄລຍະຫ່າງແມ່ນ 12_15 ຊຕມ ຫຼື 20 ຊຕມ.

### 3.2.5. ການບົວລະບັດຮັກສາ

- ກ່ອນການປັກດຳແມ່ນໃຫ້ໃສ່ຝຸ່ນຮອງພື້ນສູດ 16:20:00 ໃນອັດຕາ 150_200 ກິໂລ / ເຮັກຕາ
- ຫຼັງຈາກການປັກດຳປະມານ 20 _ 25 ມື້, ໃສ່ຝຸ່ນເລັ່ງ 46:00:00, ໃນອັດຕາ 50 ກິໂລ/ເຮັກຕາ ເພື່ອແຕກກໍ
- ຫຼັງປັກດຳ 40_45ວັນ, ໃຫ້ໃສ່ຝຸ່ນເລັ່ງສູດ 46:00:00 ໃນອັດຕາ 50 ກິໂລ / ເຮັກຕາ.
- ຄວນດູແລ ແລະຄຸ້ມຄອງລະບົບນ້ຳ ແລະພະຍາດບົ້ງແມງ

### 3.3. ການຕົກກ້າໃສ່ພື້ນຊີມັງ

- ເຮັດຂອບໜານກ້າດ້ວຍໄມ້ 4 x 8 ຫຼືກາບກ້ວຍກໍ່ໄດ້
- ນຳເອົາເມັດພັນທີ່ບົ່ມແລ້ວມາຢາຍໃສ່ໜານກ້າຄືກັບວິທີທີ່ 1
- ສ່ວນໃນຂັ້ນຕອນຂອງການປະຕິບັດແມ່ນຄືກັບວິທີທີ່ 1
- ການປັກດຳ ແລະບົວລະບັດຮັກສາແມ່ນປະຕິບັດຕາມຂອດເຕັກນິກດຽວກັນ.




Laos Extension for Agriculture Project
P.O. Box 9159
Vientiane, Lao P.D.R.
Tel/fax: 021 732 162 Mobile: 020 5526277
Email: leap@laoex.org
Email: cetdu@laoex.org

ກະຊວງກະສິກຳ ແລະ ປ່າໄມ້
ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ສົ່ງເສີມ ແລະ ຝຶກອົບຮົມ

## ຂໍ້ແນະນຳ

# ເຕັກນິກການຕົກກ້າ ດາປ໋ອກ



ຈັດຕັ້ງປະຕິບັດໂດຍ: **CETDU**

(ໜ່ວຍງານ ພັດທະນາຮູບແບບ ສົ່ງເສີມ ແລະ ຝຶກອົບຮົມ ຂັ້ນສູນກາງ)

ຮ່ວມກັບ:

ໂຄງການ ສົ່ງເສີມ ກະສິກຳ **(LEAP)**